ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 1039/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 25 ຕຸລາ 2023

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດຢູ່ເຂດເສດຖະກິດພິເສດ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ຄຳສັ່ງວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດຢູ່ເຂດເສດຖະກິດພິເສດ ເພື່ອເຮັດໃຫ້ການເຄື່ອນໄຫວກ່ຽວກັບເງິນຕາຕ່າງປະເທດມີຄວາມເປັນລະບຽບເຄື່ອນໄຫວຜ່ານລະບົບທະນາຄານ ແນໃສ່ອຳນວຍຄວາມສະດວກໃຫ້ແກ່ການຄ້າ ແລະ ການລົງທຶນ ຢູ່ເຂດດັ່ງກ່າວ ປະກອບສ່ວນເຂົ້າໃນການຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ມີປະສິດທິຜົນ.

**ມາດຕາ 2 ການຄຸ້ມຄອງເງິນຕາຕ່າງປະເທດຢູ່ເຂດເສດຖະກິດພິເສດ**

ການຄຸ້ມຄອງເງິນຕາຕ່າງປະເທດຢູ່ເຂດເສດຖະກິດພິເສດ ແມ່ນການຈັດຕັ້ງປະຕິບັດ ບັນດາຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວທຸລະກໍາເງິນຕາຕ່າງປະເທດ ຂອງຜູ້ຢູ່ເຂດເສດຖະກິດພິເສດ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຂດເສດຖະກິດພິເສດ** ໝາຍເຖິງ ເຂດເສດຖະກິດພິເສດ ບໍ່ເຕັນແດນງາມ ແລະ ເຂດເສດຖະກິດພິເສດສາມຫຼ່ຽມຄໍາ;

2. **ຜູ້ຢູ່ເຂດເສດຖະກິດພິເສດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວຢູ່ເຂດເສດຖະກິດພິເສດ;

3. **ຜູ້ໃຫ້ບໍລິການຊໍາລະ** ໝາຍເຖິງ ທະນາຄານທຸລະກິດ, ສະຖາບັນການເງິນ ຫຼື ນິຕິບຸກຄົນອື່ນ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃຫ້ບໍລິການຊໍາລະໂດຍກົງແກ່ຜູ້ໃຊ້ບໍລິການ ຊຶ່ງມີລະບົບການຊໍາລະທີ່ເປັນຂອງຕົນ ຫຼື ທີ່ເຊື່ອມຕໍ່ກັບລະບົບການຊໍາລະຂອງຜູ້ຄວບຄຸມລະບົບການຊໍາລະອື່ນ;

4. **ທຸລະກໍາ** ໝາຍເຖິງ ການດໍາເນີນກິດຈະກໍາ ກ່ຽວກັບການເປີດບັນຊີ, ການຝາກເງິນ, ການຖອນເງິນ, ການໂອນເງິນ, ການແລກປ່ຽນເງິນຕາ, ການຊື້ ຂາຍ ສິນຄ້າ ແລະ ການບໍລິການ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວຢູ່ເຂດເສດຖະກິດພິເສດ.

## ໝວດທີ 2
## ການເຄື່ອນໄຫວກ່ຽວກັບເງິນຕາຕ່າງປະເທດ

**ມາດຕາ 5 ການກໍານົດມູນຄ່າ, ການຕິດປະກາດ ແລະ ການໂຄສະນາ**

ການກໍານົດມູນຄ່າ, ການຕິດປະກາດ ແລະ ການໂຄສະນາ ລາຄາສິນຄ້າ, ຄ່າບໍລິການ ແລະ ຄ່າອື່ນ ຢູ່ເຂດເສດຖະກິດພິເສດ ຕ້ອງປະຕິບັດເງິນກີບເປັນຕົ້ນຕໍ, ສ່ວນເງິນຕາຕ່າງປະເທດຕ້ອງປະຕິບັດເປັນສໍາຮອງ ໂດຍກໍານົດໃຫ້ທຽບເທົ່າຕາມອັດຕາແລກປ່ຽນຂອງທະນາຄານທຸລະກິດໃດໜຶ່ງທີ່ປະກາດແຕ່ລະໄລຍະ ຕາມສະກຸນເງິນທີ່ໄດ້ອະນຸຍາດ ໃຫ້ຊໍາລະ ແລະ ຮັບຊໍາລະ ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້. ທຸກການກໍານົດໂຄງສ້າງລາຄາສິນຄ້າ ແລະ ການບໍລິການ ໃຫ້ຖືເອົາສະກຸນເງິນກີບ ເປັນພື້ນຖານໃນການຄິດໄລ່ໂຄງປະກອບລາຄາດັ່ງກ່າວ.

ມາດຕາ 6 ການຄອບຄອງເງິນຕາຕ່າງປະເທດ

ຜູ້ຢູ່ເຂດເສດຖະກິດພິເສດ ສາມາດຄອບຄອງເງິນຕາຕ່າງປະເທດ ດ້ວຍການຝາກໄວ້ກັບທະນາຄານທຸລະກິດຢູ່ ສປປ ລາວ ເປັນຕົ້ນຕໍ ເພື່ອຮັບປະກັນຄວາມປອດໄພ ແລະ ສະດວກໃນການນຳໃຊ້.

ຜູ້ຢູ່ເຂດເສດຖະກິດພິເສດ ສາມາດຖືຄອງເງິນຕາຕ່າງປະເທດໃນຮູບແບບເງິນສົດ ຕາມລະບຽບການກ່ຽວຂ້ອງ.

ມາດຕາ 7 ການເປີດບັນຊີເງິນຝາກນຳທະນາຄານທຸລະກິດ

ຜູ້ຢູ່ເຂດເສດຖະກິດພິເສດ ທີ່ມີຈຸດປະສົງເປີດບັນຊີເງິນຝາກສະກຸນເງິນຕາຕ່າງປະເທດ ຕ້ອງມີບັນຊີເງິນຝາກສະກຸນເງິນກີບ ນຳທະນາຄານທຸລະກິດ. ສຳລັບຜູ້ທີ່ມີບັນຊີເງິນຝາກສະກຸນເງິນຕາຕ່າງປະເທດ ກ່ອນຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແຕ່ຍັງບໍ່ມີບັນຊີເງິນຝາກສະກຸນເງິນກີບ ຕ້ອງເປີດບັນຊີເງິນຝາກສະກຸນເງິນກີບຕື່ມ ນຳທະນາຄານທຸລະກິດ.

ຜູ້ຢູ່ເຂດເສດຖະກິດພິເສດ ທີ່ມີເປົ້າໝາຍອາໄສຢູ່ເຂດເສດຖະກິດພິເສດແຕ່ ເກົ້າສິບ ວັນ ຂຶ້ນໄປ ແລະ ມີຈຸດປະສົງນຳໃຊ້ເງິນຕາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ຕ້ອງມີບັນຊີເງິນຝາກເປັນເງິນຕາຕ່າງປະເທດ ນຳທະນາຄານທຸລະກິດ ທີ່ຢູ່ເຂດເສດຖະກິດພິເສດ.

ເອກະສານປະກອບການເປີດບັນຊີເງິນຝາກ ມີດັ່ງນີ້:

ກ. ຜູ້ມີພູມລຳເນົາ ຢູ່ ສປປ ລາວ

1. ໃບສະເໜີຂໍເປີດບັນຊີເງິນຝາກ ຕາມແບບພິມຂອງທະນາຄານທຸລະກິດ;

2. ສຳເນົາເອກະສານຢັ້ງຢືນການພັກເຊົາ ຫຼື ການເຊົ່າອາຄານສະຖານທີ່ໃດໜຶ່ງ (ສຳລັບເປົ້າໝາຍອາໄສຢູ່ເຂດເສດຖະກິດພິເສດແຕ່ ເກົ້າສິບ ວັນ ຂຶ້ນໄປ);

3. ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ (ສຳລັບບຸກຄົນ);

4. ສຳເນົາໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ;

ຂ. ຜູ້ບໍ່ມີພູມລຳເນົາຢູ່ ສປປ ລາວ

1. ໃບສະເໜີຂໍເປີດບັນຊີເງິນຝາກຕາມແບບພິມຂອງທະນາຄານທຸລະກິດ;

2. ສຳເນົາເອກະສານຢັ້ງຢືນການພັກເຊົາ ຫຼື ການເຊົ່າອາຄານສະຖານທີ່ໃດໜຶ່ງ (ສຳລັບເປົ້າໝາຍອາໄສຢູ່ເຂດເສດຖະກິດພິເສດ ແຕ່ເກົ້າສິບວັນຂຶ້ນໄປ);

3. ສຳເນົາເອກະສານເດີນທາງໃດໜຶ່ງ (ສຳລັບບຸກຄົນ) ເຊັ່ນ:

- ໜັງສືຜ່ານແດນ (Passport), ປຶ້ມຜ່ານແດນ (Border pass), ໃບຜ່ານແດນ (Temporary Border Pass);
- ເອກະສານເດີນທາງອື່ນທີ່ໃຊ້ແທນໄດ້ ເປັນຕົ້ນ ເອກະສານເດີນທາງສຳລັບຄົນບໍ່ມີສັນຊາດ (Travel Document), ໃບເດີນທາງ (Laissez-passer), ໜັງສືຜ່ານແດນຊົ່ວຄາວ (Temporary Passport) ແລະ ໜັງສືຢັ້ງຢືນສະຖານະພາບບຸກຄົນ (Certificate of Identity);

4. ສຳເນົາເອກະສານຢັ້ງຢືນການຈ້າງງານໃດໜຶ່ງ ເປັນຕົ້ນ ສັນຍາແຮງງານ, ໜັງສືຢັ້ງຢືນການເຮັດວຽກ (ສຳລັບບຸກຄົນຕ່າງປະເທດທີ່ມາເຮັດວຽກຢູ່ເຂດເສດຖະກິດພິເສດ);

5. ສຳເນົາເອກະສານຢັ້ງຢືນ ຫຼື ສັນຍາຮັບເໝົາໃດໜຶ່ງ (ສຳລັບບຸກຄົນ ຫຼື ນິຕິບຸກຄົນ ຕ່າງປະເທດ ທີ່ມາເຄື່ອນໄຫວໃຫ້ບໍລິການ).

**ມາດຕາ 8 ການນຳໃຊ້ເງິນຕາ ຢູ່ເຂດເສດຖະກິດພິເສດ**

ທຸກການຊຳລະ ແລະ/ຫຼື ຮັບຊຳລະ ສາມາດປະຕິບັດເປັນເງິນກີບ ໃນຮູບແບບເງິນສົດ ແລະ ເງິນໂອນ. ສ່ວນການປະຕິບັດເປັນເງິນຕາຕ່າງປະເທດ ຕ້ອງດຳເນີນທຸລະກຳຜ່ານຜູ້ໃຫ້ບໍລິການຊຳລະ ໃນກໍລະນີ ດັ່ງນີ້:

1. ຊຳລະ ແລະ/ຫຼື ຮັບຊຳລະ ຄ່າສິນຄ້າ, ການບໍລິການ ແມ່ນປະຕິບັດ ດັ່ງນີ້:
   - ເປັນສະກຸນເງິນ ຢວນ (CNY) ຢູ່ເຂດເສດຖະກິດພິເສດບໍ່ເຕັນແດນງາມ;
   - ເປັນສະກຸນເງິນ ຢວນ (CNY) ຫຼື ບາດ (THB) ຢູ່ເຂດເສດຖະກິດພິເສດສາມຫຼ່ຽມຄຳ.
2. ຊຳລະ ແລະ/ຫຼື ຮັບຊຳລະ ເງິນເດືອນ, ເງິນແຮງງານ, ເງິນໂບນັດ, ເງິນນະໂຍບາຍສະຫວັດດີການ ແລະ ລາຍຮັບອື່ນ ຂອງຜູ້ອອກແຮງງານ ຜ່ານບັນຊີເງິນຝາກທີ່ເປີດໄວ້ນຳທະນາຄານທຸລະກິດ;
3. ຊຳລະ ແລະ/ຫຼື ຮັບຊຳລະ ເງິນລົງທຶນ, ເງິນປັນຜົນ ແລະ ໜີ້ສິນ.

ສຳລັບການບໍລິການກາຊີໂນ ສາມາດຊຳລະ ແລະ/ຫຼື ຮັບຊຳລະ ເປັນເງິນຕາຕ່າງປະເທດ ຜ່ານຜູ້ໃຫ້ບໍລິການຊຳລະ ຫຼື ເປັນເງິນສົດ ສະເພາະໃນຂອບເຂດການບໍລິການຂອງກາຊີໂນເທົ່ານັ້ນ.

**ມາດຕາ 9 ການຊຳລະກັບຕ່າງປະເທດ**

ຜູ້ຢູ່ເຂດເສດຖະກິດພິເສດ ທີ່ຕ້ອງການດຳເນີນທຸລະກຳຊຳລະກັບຕ່າງປະເທດທີ່ຕິດພັນກັບ ການຄ້າ ແລະ ການບໍລິການ, ລາຍຮັບ ແລະ ເງິນຊ່ວຍເຫຼືອລ້າ, ການລົງທຶນໂດຍກົງ, ການລົງທຶນໃນຫຼັກຊັບ, ການກູ້ຢືມ, ການຝາກເງິນ ແລະ ການນຳເງິນສົດເຂົ້າ-ອອກ ສປປ ລາວ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ຜູ້ຢູ່ເຂດເສດຖະກິດພິເສດ ທີ່ມີຈຸດປະສົງຂໍການຢັ້ງຢືນການນຳທຶນເຂົ້າ ສປປ ລາວ, ນຳທຶນອອກໄປລົງທຶນໂດຍກົງຢູ່ຕ່າງປະເທດ, ໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ, ເປີດບັນຊີເງິນຝາກຢູ່ຕ່າງປະເທດ ແລະ ນຳເງິນສົດອອກ ສປປ ລາວ ໃຫ້ສະເໜີຕໍ່ຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ ປະຈຳເຂດເສດຖະກິດພິເສດນັ້ນ ເພື່ອພິຈາລະນາຕາມຂອບເຂດສິດ ແລະ ລະບຽບການ.

**ມາດຕາ 10 ພັນທະຂອງຜູ້ໃຫ້ບໍລິການຊຳລະ**

ຜູ້ໃຫ້ບໍລິການຊຳລະ ທີ່ໃຫ້ບໍລິການຢູ່ເຂດເສດຖະກິດພິເສດ ມີພັນທະ ດັ່ງນີ້:

1. ອຳນວຍຄວາມສະດວກໃນການເປີດບັນຊີເງິນຝາກໃຫ້ແກ່ຜູ້ຢູ່ເຂດເສດຖະກິດພິເສດ;
2. ຂະຫຍາຍຕາໜ່າງການບໍລິການ, ພັດທະນາເຄື່ອງມື ແລະ ຊ່ອງທາງ ການຊຳລະ ເພື່ອຮອງຮັບການຊຳລະເປັນເງິນຕາຕ່າງປະເທດຜ່ານລະບົບຂອງຕົນ ເປັນຕົ້ນ ຄ່າສິນຄ້າ, ຄ່າບໍລິການ, ຄ່າແຮງງານ;
3. ສະໜອງຂໍ້ມູນ ແລະ ສະຫຼຸບລາຍງານ ກ່ຽວກັບການບໍລິການເງິນຕາຕ່າງປະເທດ ໃຫ້ຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ ປະຈຳເຂດເສດຖະກິດພິເສດນັ້ນ;
4. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ການຄຸ້ມຄອງວຽກງານເງິນຕາຕ່າງປະເທດຢູ່ເຂດເສດຖະກິດພິເສດ

**ມາດຕາ 11 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງເງິນຕາຕ່າງປະເທດ**

ໃນການຄຸ້ມຄອງເງິນຕາຕ່າງປະເທດຢູ່ເຂດເສດຖະກິດພິເສດ, ກົມຄຸ້ມຄອງເງິນຕາຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດຢູ່ເຂດເສດຖະກິດພິເສດ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ເກັບກຳ, ສັງລວມ ແລະ ວິເຄາະ ຂໍ້ມູນ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ຈາກສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອແຂວງອຸດົມໄຊ;

3. ປະສານສົມທົບກັບບັນດາກົມພາຍໃນທະນາຄານແຫ່ງ ສປປ ລາວ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອແຂວງອຸດົມໄຊ ແລະ ຂະແໜງການກ່ຽວຂ້ອງຢູ່ເຂດເສດຖະກິດພິເສດ ໃນການຈັດຕັ້ງຜັນຂະຫຍາຍນະໂຍບາຍ, ນິຕິກຳ ພ້ອມທັງຕິດຕາມ ກວດກາ ຜູ້ຢູ່ເຂດເສດຖະກິດພິເສດ ທີ່ກ່ຽວຂ້ອງກັບການຄຸ້ມຄອງເງິນຕາຕ່າງປະເທດ;

4. ສະຫຼຸບຕີລາຄາ ສະພາບການຄຸ້ມຄອງເງິນຕາຕ່າງປະເທດຢູ່ເຂດເສດຖະກິດພິເສດ ເພື່ອລາຍງານໃຫ້ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ.

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອແຂວງອຸດົມໄຊ**

ໃນການຄຸ້ມຄອງເງິນຕາຕ່າງປະເທດຢູ່ເຂດເສດຖະກິດພິເສດ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອແຂວງອຸດົມໄຊ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່ ນະໂຍບາຍ, ນິຕິກຳ ພ້ອມທັງຕິດຕາມ ກວດກາ ຜູ້ຢູ່ເຂດເສດຖະກິດພິເສດ ທີ່ກ່ຽວຂ້ອງກັບການຄຸ້ມຄອງເງິນຕາຕ່າງປະເທດ;

2. ຊີ້ນຳ, ຊຸກຍູ້, ສົ່ງເສີມ, ຕິດຕາມ ກວດກາ ການເຄື່ອນໄຫວ ຂອງຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ ປະຈຳເຂດເສດຖະກິດພິເສດ;

3. ນຳໃຊ້ມາດຕະການຕໍ່ຜູ້ທີ່ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂໍ້ 1 ຂອງຂໍ້ຕົກລົງສະບັບນີ້;

4. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຕິດຕາມ ກວດກາ ແລະ ນຳໃຊ້ມາດຕະການ ຕໍ່ຜູ້ທີ່ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂໍ້ 2, 3, 4 ແລະ 5 ຂອງຂໍ້ຕົກລົງສະບັບນີ້;

5. ສະຫຼຸບ ແລະ ລາຍງານ ສະພາບການຄຸ້ມຄອງເງິນຕາຕ່າງປະເທດຢູ່ເຂດເສດຖະກິດພິເສດ ໃຫ້ກົມຄຸ້ມຄອງເງິນຕາຕ່າງປະເທດ ຫຼື ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ.

**ມາດຕາ 13 ສິດ ແລະ ໜ້າທີ່ ຂອງຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ ປະຈຳເຂດເສດຖະກິດພິເສດ**

ຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ ປະຈຳເຂດເສດຖະກິດພິເສດ ມີສິດ ແລະ ໜ້າທີ່ຮັບຂໍ້ສະເໜີຂອງຜູ້ຢູ່ເຂດເສດຖະກິດພິເສດ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ໜ້າທີ່ອື່ນ ຕາມລະບຽບການທີ່ກ່ຽວຂ້ອງ ພ້ອມທັງສະຫຼຸບ ແລະ ລາຍງານ ສະພາບການຄຸ້ມຄອງເງິນຕາຕ່າງປະເທດຢູ່ເຂດເສດຖະກິດພິເສດ ໃຫ້ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອແຂວງອຸດົມໄຊ ແລະ ກົມຄຸ້ມຄອງເງິນຕາຕ່າງປະເທດ ຢ່າງເປັນປົກກະຕິ.

## ໝວດທີ 4
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 14 ຂໍ້ຫ້າມ**

ຫ້າມຜູ້ຢູ່ເຂດເສດຖະກິດພິເສດ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ເງິນຕາຕ່າງປະເທດ ເຂົ້າໃນການຊຳລະ ແລະ/ຫຼື ຮັບຊຳລະ ຄ່າສິນຄ້າ, ການບໍລິການ ແລະ ຄ່າອື່ນ ຢູ່ເຂດເສດຖະກິດພິເສດ ໂດຍບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

2. ໂຄສະນາ ແລະ/ຫຼື ປະກາດ ການບໍລິການແລກປ່ຽນເງິນຕາຕ່າງປະເທດ, ການຈັດຝຶກອົບຮົມ, ເຮັດການຕະຫຼາດ ກ່ຽວກັບເງິນຕາຕ່າງປະເທດ ທຸກຮູບແບບ;

3. ໃຫ້ບໍລິການຊຳລະຢູ່ພາຍໃນເຂດເສດຖະກິດພິເສດ ຜ່ານລະບົບ, ເຄື່ອງມື ແລະ ຊ່ອງທາງ ການຊຳລະ ທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

4. ໃຫ້ບໍລິການເງິນຕາຕ່າງປະເທດ ຫຼື ໃຊ້ບໍລິການກັບຜູ້ໃຫ້ບໍລິການເງິນຕາຕ່າງປະເທດ ທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ເປັນຕົ້ນ ການບໍລິການໂອນເງິນຕາຕ່າງປະເທດ, ຮັບຝາກເງິນ ແລະ ສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ ແລະ ແລກປ່ຽນເງິນຕາ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 15 ມາດຕະການຕໍ່ຜູ້ລະເມີດ**

ຜູ້ຢູ່ເຂດເສດຖະກິດພິເສດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ມີລັກສະນະເບົາ ແລະ ເປັນຄັ້ງທຳອິດ ຈະຖືກກ່າວເຕືອນຢ່າງເປັນລາຍລັກອັກສອນ, ແຕ່ຖ້າຍັງສືບຕໍ່ກະທຳຜິດຊ້ຳ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ປັບໃໝແຕ່ 10.000.000 (ສິບລ້ານ) ກີບ ຫາ 20.000.000 (ຊາວລ້ານ) ກີບ ສຳລັບເຄື່ອນໄຫວທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້ ທີ່ມີມູນຄ່າທຽບເທົ່າຕ່ຳກວ່າ 10.000.000 (ສິບລ້ານ) ກີບ ຫຼື ລະເມີດມາດຕາ 14 ຂໍ້ 2 ແລະ ຂໍ້ 3 ຂອງຂໍ້ຕົກລົງສະບັບນີ້;

2. ປັບໃໝ 10% (ສິບສ່ວນຮ້ອຍ) ຂອງມູນຄ່າທີ່ລະເມີດ ສຳລັບການເຄື່ອນໄຫວທີ່ເປັນການລະເມີດ ມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ທີ່ມີມູນຄ່າທຽບເທົ່າແຕ່ 10.000.000 (ສິບລ້ານ) ກີບ ຂຶ້ນໄປ;

3. ສຳລັບການລະເມີດຊ້ຳໃນແຕ່ລະກໍລະນີ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າປັບໃໝໃນຄັ້ງຫຼ້າສຸດ.

ຜູ້ຢູ່ເຂດເສດຖະກິດພິເສດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງມີອົງປະກອບຂອງການກະທຳຜິດທາງອາຍາ ແລະ ສ້າງຄວາມເສຍຫາຍແກ່ລະບົບເສດຖະກິດ, ການເງິນ - ເງິນຕາ ຂອງ ສປປ ລາວ ຈະຖືກລົງໂທດຕາມປະມວນກົດໝາຍອາຍາ ຫຼື ກົດໝາຍອື່ນທີ່ກຳນົດໂທດທາງອາຍາ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 16 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງເງິນຕາຕ່າງປະເທດ, ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອແຂວງອຸດົມໄຊ, ຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ ປະຈຳເຂດເສດຖະກິດພິເສດ ເປັນເຈົ້າການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ຜູ້ຢູ່ເຂດເສດຖະກິດພິເສດ, ຜູ້ໃຫ້ບໍລິການຊຳລະ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 17 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ອນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ ລາວ ຜູ້ວ່າການ

ບຸນເຫຼືອ ສິນໄຊວໍລະວົງ